ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
********◇********

ຫ້ອງວ່າການລັດຖະບານ
ຄະນະກຳມະການຄຸ້ມຄອງແຫ່ງຊາດ ເພື່ອການແກ້ໄຂ
ບັນຫາລະເບີດບໍ່ທັນແຕກ ທີ່ຕົກຄ້າງ ຢູ່ ສປປ ລາວ

ເລກທີ 36 /ຄຊກລ.ສຄ
ນະຄອນຫລວງວຽງຈັນ, ວັນທີ: 18 OCT 2016

# ບົດບັນທຶກ ກອງປະຊຸມກຸ່ມວິຊາການ
# ໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 03, 2016

ກອງປະຊຸມກຸ່ມວິຊາການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ປະຈຳໄຕມາດ 03, 2016 ໄດ້ໄຂຂຶ້ນ ໃນວັນທີ 23 ເດືອນ ກັນຍາ ປີ 2016, ເວລາ 08:30 ຢູ່ທີ່ຫ້ອງປະຊຸມຂອງຫ້ອງການ ຄຊກລ ໂດຍການເປັນປະທານຂອງ ທ່ານ ບຸນພະມິດ ໂສມວິຈິດ ຮອງຫົວໜ້າຫ້ອງການ ຄຊກລ, ຜູ້ຊີ້ນຳວຽກງານປະຕິບັດງານ ໂດຍມີຕົວແທນຈາກອົງການປະຕິບັດງານ ແລະ ຄູ່ຮ່ວມງານຕ່າງໆ ລວມທັງພະນັກງານ ແລະ ວິຊາການຫ້ອງການ ຄຊກລ ເຂົ້າຮ່ວມຈຳນວນ: 13 ທ່ານ, ຍິງ: 03, ທ່ານ.

ໃນການກ່າວໄຂກອງປະຊຸມ, ທ່ານປະທານກອງປະຊຸມໄດ້ເນັ້ນໜັກເຖິງຈຸດປະສົງຂອງກອງປະຊຸມກຸ່ມວິຊາການ ແມ່ນກອງປະຊຸມ ເພື່ອແລກປ່ຽນສົນທະນາ, ປຶກສາຫາລືກ່ຽວກັບ ແນວທາງໃນການໂຄສະນາຜົນຮ້າຍຂອງ ລບຕ ໃຫ້ປະຊາຊົນເຂົ້າໃຈ ແລະ ສາມາດຫຼີກລ່ຽງ ການເກີດອຸປະຕິເຫດຈາກ ລບຕ.

ໃນກອງປະຊຸມ ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ຫ້ອງການ ຄຊກລ ໄດ້ທົບທວນບົດບັນທຶກກອງປະຊຸມຄັ້ງທີ່ຜ່ານມາໂດຍຫຍໍ້ ພ້ອມກັບລາຍງານການເຄື່ອນໄຫວວຽກປະຈຳໄຕມາດ 03 ປີ 2016 ແລະ ແຜນຄາດຄະເນ ໃນໄຕມາດ 4 ປີ 2016 ເຊິ່ງໃນນີ້ແມ່ນຈະຊຸມໃສ່: ຊຸກຍູ້ກະຊວງ ຖວທ ຈັດລາຍການວິທະຍຸ ເພື່ອໂຄສະນາຜົນຮ້າຍຂອງ ລບຕ ໃນ 4 ແຂວງ (ແຂວງຄຳມ່ວນ, ສາລາວັນ, ເຊກອງ ແລະ ຈຳປາສັກ), ຈັດກອງປະຊຸມກຸ່ມວິຊາການ, ຈັດພິມຄູ່ມືການໂຄສະນາ.

ຈາກນັ້ນຕາງໜ້າຈາກບັນດາອົງການປະຕິບັດງານ ແລະ ຄູ່ຮ່ວມງານຕ່າງໆ ກໍ່ໄດ້ຜັດປ່ຽນກັນລາຍງານຜົນສຳເລັດໃນການປະຕິບັດວຽກງານຂອງຕົນໃນໄລຍະ 03 ເດືອນທີ່ຜ່ານມາ ແລະ ແຜນການເຄື່ອນໄຫວໃນໄຕມາດ 04, ປີ 2016 ໃນນີ້ ໄດ້ມີ ທ່ານຜູ້ຕາງໜ້າອົງການນ້ຳ ໃຈນັກກິລາ ປະຈຳ ສປປ ລາວ, ທ່ານຜູ້ຕາງໜ້າ ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ), ອົງການສາກົນເພື່ອຄົນພິການ (HI), ທ່ານຜູ້ຕາງໜ້າອົງການ WEL ໂຄງການສຶກສາເລື່ອງລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ, ທ່ານຜູ້ຕາງໜ້າ ອົງການ DCA, ອົງການເກັບກູ້ລະເບີດຮາໂລເທັສ໌ (Halo-Trust), ໄດ້ລາຍງານຜົນສຳເລັດຂອງການເຄື່ອນໄຫວວຽກງານໃນໄຕມາດ 03, 2016 ແລະ ແຜນວຽກປະຈຳໄຕມາດ 04, 2016. ສ່ວນ ລາຍລະອຽດ ຂອງການເຄື່ອນໄຫວ ຂອງແຕ່ລະພາກສ່ວນພ້ອມດ້ວຍແຜນແມ່ນສາມາດເບິ່ງໄດ້ ໃນເອກະສານ ຊ້ອນທ້າຍ.

**ໃນກອງປະຊຸມ ຍັງໄດ້ສົນທະນາ ແລະ ປຶກສາຫາລືກັນໃນຫຼາຍຫົວຂໍ້ທີ່ໜ້າສົນໃຈ:**

- ໜ່ວຍງານຊ່ວຍເຫຼືອຜູ້ປະສົບເຄາະຮ້າຍ ຫ້ອງການ ຄຊກລ ກໍ່ໄດ້ແຈ້ງກ່ຽວກັບສະຖິຕິການເກີດອຸປະຕິເຫດຈາກ ລບຕ ປະຈຸບັນມີຜູ້ຖືກເຄາະຮ້າຍຈາກ ລບຕ ຈຳນວນ 46 ຄົນ, ບາດເຈັບ 40 ຄົນ, ເສຍຊີວິດ 6 ຄົນ ແລະ ແຂວງຊຽງຂວາງເປັນແຂວງທີ່ມີຜູ້ປະສົບເຄາະຮ້າຍຫຼາຍກວ່າໝູ່.

ບ້ານສີສັງວອນ, ເມືອງໄຊເສດຖາ, ໄປສະນີ: 7261, ໂທ: (856-21) 262386, ແຟັກ : 262396,
ອີເມວ: uxo.nra@gmail.com, www.nra.gov.la

- ສາເຫດຂອງອຸປະຕິເຫດສ່ວນຫລາຍແມ່ນການດັງໄຟ, ຂຸດດິນ, ຫຼີ້ນລະເບີດ.
- ຢູ່ບ້ານສອນມອນ, ເມືອງຫີນເຫີບ, ແຂວງວຽງຈັນ ເຫດເກີດຢູ່ແຄັມ , ເດັກນ້ອຍຫຼີ້ນລະເບີດແລ້ວເອົາມາໂຍນໃສ່ແຄັມມີຄົນບາດເຈັບ ແລະ ຢູ່ແຂວງອັດຕະປືໄປຫາປາ ແລ້ວ ຈະປີ້ງປາ, ໄດ້ເກີດອຸປະຕິເຫດ ລະເບີດແຕກມີຄົນບາດເຈັບ 2 ຄົນແຂນຫັກ ແລະ ຕາບອດ.

- ໜ່ວຍງານຖານຂໍ້ມູນ ຫ້ອງການ ຄຊກລ ໄດ້ສະເໜີໃຫ້ແຕ່ລະພາກສ່ວນເອົາໃຈໃສ່ໃນການລາຍງານເພາະການລາຍງານຂໍ້ມູນເຂົ້າຖານຂໍ້ມູນແຫ່ງຊາດແມ່ນສຳຄັນຫລາຍ ເພື່ອເປັນຫຼັກຖານ ແລະ ຢັ້ງຢືນຂໍ້ມູນໃນການຂໍທຶນນຳຜູ້ໃຫ້ທຶນ.
- ໜ່ວຍງານຄົ້ນຄວ້າສັງລວມ ໄດ້ສະເໜີວ່າໂດຍລວມແລ້ວທຶນຂອງວຽກງານໂຄສະນາລະເບີດບໍ່ທັນແຕກແມ່ນຍັງມີໜ້ອຍ ເປັນໂອກາດດີທີ່ ທ່ານ ນ. ແອມມ້າ ຈາກ WRA ມີແຜນຈະມາຢ້ຽມຢາມລາວໃນເດືອນ ພະຈິກ 2016 ຈະມີການປຶກສາຫາລືກ່ຽວກັບງົບປະມານ 90 ລ້ານ ແລະ ແຜນການແຈກຢາຍທຶນ, ສະນັ້ນ ສະເໜີແຕ່ລະພາກສ່ວນກະກຽມເພື່ອສະເໜີຂໍທຶນ.

  - ຂະບວນການຄົ້ນຄວ້າບົດບັນທຶກຄວາມເຂົ້າໃຈ ປະຈຸບັນ ກະຊວງການຕ່າງປະເທດໄດ້ແຈ້ງໃຫ້ນຳໃຊ້ 2 ແບບຟອມ ຄື: ຮ່າງບົດບັນທຶກຄວາມເຂົ້າໃຈ ແລະ ຮ່າງບົດບັນທຶກຂໍ້ຕົກລົງ ໂດຍທັງ 2 ຮ່າງແມ່ນມີເງື່ອນໄຂຕ່າງກັນ ແຕ່ຂະບວນການຂໍອະນຸມັດແມ່ນຄືກັນ (ສ່ວນຮ່າງແບບຟອມຈະສົ່ງໃຫ້ຕາມຫຼັງ).

- ໜ່ວຍງານໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ແຜນວຽກກິດຈະກຳຂອງແຕ່ລະອົງການມີແຜນແນວໃດ? ຄາດຄະເນແຜນກິດຈະກຳ, ຫຼັກໆຢາກຮູ້ຈະເຮັດກິດຈະກຳຫຍັງ? ເພື່ອໃຫ້ສອດຄ່ອງກັບແຜນ 5 ປີ, ຖ້າເປັນ MOU ເກົ່າຢາກໃຫ້ກຳນົດບ້ານ, ເມືອງມາໃຫ້ພ້ອມ, ຄາດວ່າຈະໃຊ້ງົບປະມານຫລາຍປານໃດ, ຖ້າອົງການໃດມີທັງ CL,MRE ຢາກໃຫ້ແຍກສະເພາະເປັນວຽກຂອງ MRE, ຂໍເປັນສະບັບຮ່າງກໍ່ໄດ້ ຢາກຮູ້ວ່າແຕ່ລະອົງການເຄື່ອນໄຫວແນວໃດ, ສະເໜີແຕ່ລະອົງການສົ່ງໜັງສືຕອບກັບພ້ອມຮ່າງແຜນ 2017 ບໍ່ກາຍ 30/10/2016.

1. ໂຄງການເກັບກູ້ລະເບີດແຫ່ງຊາດ (ຄກລ) ກິດຈະກຳທີ່ໄດ້ປະຕິບັດການຝຶກອົບຮົມທົບທວນຄືນຂອງ ອສບ ໂດຍການສະໜັບສະໜູນຈາກ ຄຊກລ 2 ແຂວງ ແຂວງເຊກອງ ແລະ ແຂວງຈຳປາສັກ.

- ສຳລັບໄຕມາດ 4, 2016 ມີແຜນ ຈັດກອງປະຊຸມ ສະຫຼຸບຖອດຖອນບົດຮຽນ ກິດຈະກຳການໂຄສະນາສຶກສາຄວາມສ່ຽງໄພຈາກ ລບຕ ແຕ່ປີ 1996 ເຖິງປະຈຸບັນ ແລະ ການປັບປຸງກິດຈະກຳການໂຄສະນາແບບໃໝ່ໃຫ້ແທດເໝາະກັບຍຸກປະຈຸບັນ, ຈັດຢູ່ແຂວງຄຳມ່ວນ.

2. ອົງການ DCA ການປະຕິບັດກິດຈະກຳ ໃນໄຕມາດ 3 ປີ 2016 ພື້ນທີ່ເປົ້າໝາຍ ເມືອງແປກ ແລະ ເມືອງຄຳ ແຂວງຊຽງຂວາງ, ເມືອງໃໝ່, ເມືອງຂວາ ແຂວງຜົ້ງສາລີ.

- ນອກນີ້ອົງການ DCA ຍັງ ສະເໜີວ່າມີອຸປະຕິເຫດຈາກ ລບຕ ຢູ່ແຂວງຜົ້ງສາລີ ປະຈຸບັນກຳລັງເກັບກຳຂໍ້ມູນແລ້ວຈະສົ່ງມາລາຍງານອີກຄັ້ງໜຶ່ງ (ຍັງບໍ່ລວມຜູ້ຖືກເຄາະຮ້າຍ 46 ຄົນ).

3. ອົງການເວີລດ໌ເອດຢູ່ເດຊຸ້ນ ໄດ້ສະເໜີເຖິງກະຊວງສຶກສາ ແລະ ກິລາ ກ່ຽວກັບແຜນຕໍ່ໜ້າ 6 ເດືອນທ້າຍປີ, ໄດ້ຮັບອະນຸຍາດຈາກກະຊວງສຶກສາແລ້ວທາງໂທລະສັບ ແລະ ໄດ້ຈັດຕັ້ງປະຕິບັດກິດຈະກຳໄປແລ້ວ.

4. ອົງການນ້ຳໃຈນັກກິລາ ສຳລັບໄຕມາດ 3, 2016 ໄດ້ມີການປະເມີນທ້າຍໂຄງການຢູ່ທີ່ແຂວງຊຽງຂວາງ ຜົນການປະເມີນເຫັນວ່າເດັກມັກກິດຈະກຳນີ້ຫຼາຍ ບັນຫາແມ່ນເລື່ອງການປະສານງານ ສຳລັບໄຕມາດ 4 ຈະມີກອງປະຊຸມສະຫຼຸບການປະເມີນຜົນ ແລະ ຜ່ານຮ່າງໂຄງການໃໝ່ຢູ່ແຂວງຊຽງຂວາງ.

ໃນນີ້ຕອນທ້າຍຂອງກອງປະຊຸມ ທ່ານປະທານກອງປະຊຸມໄດ້ຊີ້ນຳວ່າ:

1. ເລື່ອງແຜນປີ 2017 ສະເໜີໃຫ້ແຕ່ລະອົງການສົ່ງບໍ່ໃຫ້ກາຍ ວັນທີ 30/10/2016 ຮ່າງເປັນກິດຈະກຳໃນ MOU ຫຼື ບາງກິດຈະກຳ ຢູ່ໃນໄລຍະດຳເນີນຂະບວນການ ສາມາດໃສ່ໄດ້ແຕ່ໃຫ້ຂຽນລະອຽດວ່າກິດຈະກຳໃດມີ MOU ແລ້ວ, ກິດຈະກຳໃດຍັງຢູ່ຂະບວນການ.
2. ສຳລັບການລາຍງານແມ່ນຢາກໃຫ້ມີກິດຈະກຳ ແລະ ງົບປະມານໄປພ້ອມກັນ.
3. ເລື່ອງ MOU, MOA ສະເໜີໃຫ້ເອົາໃຈໃສ່ລະອຽດມາແຕ່ລະທ້ອງຖິ່ນ (ແຂວງ,ເມືອງ) ຈະເຮັດໃຫ້ຂະບວນການໄວຂຶ້ນ ຖ້າເອກະສານຄົບຖ້ວນມາແລ້ວ.
4. ຖ້າມີອຸປະຕິເຫດໃນເຂດເປົ້າໝາຍຂອງຕົນເອງ ສະເໜີໃຫ້ລາຍງານໄວ ສ່ວນເອກະສານລະອຽດມາຕາມພາຍຫຼັງກໍ່ໄດ້.

❖ **<u>ໝາຍເຫດ</u>:** ສຳລັບລາຍລະອຽດຂອງຜົນການເຄື່ອນໄຫວປະຕິບັດກິດຈະກຳ ແລະ ສະຖິຕິການເຄື່ອນໄຫວເຮັດວຽກໃນໄຕມາດ 03, 2016 ແລະ ແຜນວຽກໃນໄຕມາດ 04, 2016 ຂອງບັນດາອົງການປະຕິບັດງານ, ທ່ານສາມາດເບິ່ງໄດ້ໃນເອກະສານຄັດຕິດ.

**ປະທານກອງປະຊຸມ**

ຫ້ອງການ ຄຊກລ

ບຸນພະມິດ ໂສມວິຈິດ

Mr.Bounphamith SOMVICHITH

**ບັນທຶກກອງປະຊຸມໂດຍ:**

ບ້ານສີສັງວອນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ,ໄປສະນີ 726, ໂທ: (85621) 262386, ແຟັກ : 262396,
ເບີອີເມວ : uxo.nra@gmail.com, www.nra.gov.la